ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

07972

ເລກທີ:............../ກພສ

ນະຄອນຫຼວງວຽງຈັນ, ວັນທີ: 25 JUL 2016

# ແຈ້ງການ

**ເຖິງ :** ຫົວໜ້າດ່ານພາສີຂົວມິດຕະພາບ I ແລະ ດ່ານພາສີ ສາງທ່ານາແລ້ງ

**ເລື່ອງ :** ການຄຸ້ມຄອງລົດຂົນສົ່ງສິນຄ້າຜ່ານດ່ານຂົວມິດຕະພາບ I ເຂົ້າລະບົບສາງຕູ້ຄອນເທນເນີ (CY) ທີ່ສະຖານນີລົດໄຟທ່ານາແລ້ງ.

- ອີງຕາມ ກົດໝາຍພາສີ ສະບັບເລກທີ 04/ສພຊ ລົງວັນທີ 20 ທັນວາ 2011.
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 1765/ກງລົງວັນທີ 03 ມິຖຸນາ 2015 ວ່າດ້ວຍການຈັດຕັ້ງແລະ ການເຄື່ອນໄຫວຂອງກົມພາສີ.
- ອີງຕາມ ຂໍ້ຕົກລົງຂອງ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ສະບັບເລກທີ 0187/ກງ ລົງວັນທີ 23/06/2016 ວ່າດ້ວຍການອະນຸມັດໃຫ້ລັດວິສະຫະກິດ ລາວບໍລິການ ສິນຄ້າຜ່ານແດນ ເປັນຜູ້ຄຸ້ມຄອງ ແລະ ດຳເນີນການໃຫ້ບໍລິການ ລະບົບສາງຕູ້ຄອນເທນເນີ (CY) ທີ່ສະຖານລົດໄຟທ່ານາແລ້ງ.
- ອີງຕາມ ກອງປະຊຸມປຶກສາຫາລື ທີ່ກະຊວງການເງິນ ຄັ້ງວັນທີ 10 ມິຖຸນາ 2016.

## ກົມພາສີ ອອກແຈ້ງການ, ຄື :

1. ມອບໃຫ້ດ່ານພາສີຂົວມິດຕະພາບ I, ດ່ານພາສີສາງທ່ານາແລ້ງ ເອົາໃຈໃສ່ປະສານສົມທົບກັບລັດວິສະຫະກິດລາວບໍລິການສິນຄ້າຜ່ານແດນ ໃນການຄຸ້ມຄອງລົດບັນທຸກສິນຄ້າທີ່ບໍ່ມີຄວາມສ່ຽງ ເຂົ້າຈອດພັກ ຫລື ເກັບມ້ຽນ ທີ່ສາງຕູ້ຄອນເທນເນີ (CY) ທີ່ສະຖານນີລົດໄຟທ່ານາແລ້ງ ນັບແຕ່ວັນທີ **26/07/2016** ເປັນຕົ້ນໄປ.

2. ລົດບັນທຸກສິນຄ້າຂາເຂົ້າທຸກຄັນ ຕ້ອງໄດ້ແຈ້ງເອກະສານຂົນສົ່ງ ແລະ ພາຫະນະຂົນສົ່ງ ທີ່ດ່ານຂົວມິດຕະພາບ I ຕາມທີ່ກຳນົດໄວ້ໃນມາດຕາ 19 ຂອງກົດໝາຍວ່າດ້ວຍພາສີ. ຈາກນັ້ນໃຫ້ດຳເນີນການຕາມລະບຽບການແລະຂັ້ນຕອນ, ຄື :

2.1. ສິນຄ້າປະເພດນ້ຳມັນເຊື້ອໄຟ, ວັດຖຸໄວໄຟ, ສັດມີຊີວິດ ແລະ ສິນຄ້າບູດເນົ່າ ໃຫ້ຈອດພັກແລະດຳເນີນການແຈ້ງພາສີເປັນລາຍລະອຽດ ທີ່ດ່ານພາສີຂົວມິດຕະພາບ I;

2.2. ສິນຄ້າ, ເຄື່ອງຂອງ ທີ່ມີເປົ້າໝາຍນຳເຂົ້າເສຍພາສີ-ອາກອນ, ສິນຄ້າຝາກສາງກາຍກຳນົດ 4 ເດືອນ ແລະ ສິນຄ້າ,ເຄື່ອງຂອງອື່ນໆ ທີ່ມີຄວາມສ່ຽງໃນການລັກລອບ ໃຫ້ນຳເຂົ້າຈອດພັກຫລືເກັບມ້ຽນທີ່ດ່ານພາສີສາທ່ານາແລ້ງ ເພື່ອດຳເນີນການແຈ້ງພາສີເປັນລະອຽດ.

2.3. ສິນຄ້າ, ເຄື່ອງຂອງນຳເຂົ້າຍົກເວັ້ນຄ່າພາສີ-ອາກອນ ຂອງບັນດາໂຄງການລົງທຶນ ແລະ ຂອງລັດຖະບານ ໃຫ້ນຳເຂົ້າຈອດພັກ ຫລື ເກັບມ້ຽນ ທີ່ສາງຕູ້ຄອນເທນເນີ (CY) ທີ່ສະຖານນີລົດໄຟ ທ່ານາແລ້ງ. ໃນໄລຍະກະກຽມການຕິດຕັ້ງລະບົບການແຈ້ງພາສີແບບເອເລັກໂຕລນິກຂອງພາສີ (ອາຊີກູດາ), ສິນຄ້າເຄື່ອງຂອງທີ່ເກັບມ້ຽນຢູ່ສາງຕູ້ຄອນເທນເນີ ແມ່ນໃຫ້ດຳເນີນການແຈ້ງພາສີເປັນລາຍລະອຽດ ທີ່ດ່ານພາສີສາງທ່ານາແລ້ງໄປກ່ອນ ຈົນກ່ວາຈະຕິດຕັ້ງລະບົບໃຫ້ສຳເລັດ.

3. ມອບໃຫ້ດ່ານພາສີສາງທ່ານາແລ້ງ ເປັນຜູ້ຮັບຜິດຊອບໃນການຄຸ້ມຄອງສາງຕູ້ຄອນເທນເນີ (CY) ຕາມລະບຽບການ ທີ່ໄດ້ກຳນົດໃນບົດແນະນຳກະຊວງການເງິນ ສະບັບເລກທີ 1559/ກງ ລົງວັນທີ 24 ພຶດສະພາ 2016 ມາດຕາ 15 ວ່າດ້ວຍລະບຽບການສ້າງຕັ້ງສາງສິນຄ້າ,ເຄື່ອງຂອງ.

4. ໃຫ້ສອງດ່ານປະສານສົມທົບກັນຢ່າງໃກ້ຊິດໃນການຕິດຕາມຄຸ້ມຄອງລັດບັນທຸກສິນຄ້າ ທີ່ເຄື່ອນຍ້າຍຈາກດ່ານຂົວມິດຕະພາບ I ໄປຕາມເສັ້ນທາງເຂົ້າສູ່ສາງຕູ້ຄອນເທນເນີ ແລະ ເອົາໃຈໃສ່ສະຫລູບສົມທຽບບັນຊີຈຳນວນລົດຂົນສົ່ງສິນຄ້າ ໃນແຕ່ລະວັນ ໃຫ້ຖືກຕ້ອງຄົບຖ້ວນ, ແນໃສ່ເພື່ອບໍ່ໃຫ້ມີຊ່ອງວ່າງໃນການລັກລອບໜີພາສີ.

5. ມອບໃຫ້ດ່ານພາສີຂົວມິດຕະພາບ I ແລະ ດ່ານພາສີສາງທ່ານາແລ້ງ ເອົາໃຈໃສ່ແນະນຳໃຫ້ຜູ້ປະກອບການໄດ້ຮັບຊາບ ເພື່ອພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ສຳເລັດຜົນຕາມຄາດໝາຍ.

ດັ່ງນັ້ນ,ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

<u>ບ່ອນນຳສົ່ງ</u> :

| | |
|---|---|
| - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການເງິນ | 1 ສະບັບ "ໃຊ້ຕາງລາຍງານ" |
| - ທ່ານຮອງລັດຖະມົນຕີກະຊວງກະຊວງການເງິນ, ຜູ້ຊີ້ນຳ | 1 ສະບັບ"ໃຊ້ຕາງລາຍງານ" |
| - ຫົວໜ້າພະແນກການເງິນນະຄອນຫລວງວຽງຈັນ | 1 ສະບັບ "ເພື່ອຊາບ" |
| - ຜູ້ອຳນວຍການລັດວິສະຫະກິດລາວບໍລິການສິນຄ້າຜ່ານແດນ | 1 ສະບັບ "ເພື່ອປະສານສົມທົບ" |
| - ບັນດາພະແນກການກົມພາສີ, ພະແນກລະ | 1 ສະບັບ "ເພື່ອຕິດຕາມກວດກາ" |
| - ກອງກວດກາພາສີນະຄອນຫລວງ | 1 ສະບັບ "ເພື່ອປະຕິບັດ" |
| - ເກັບມ້ຽນສຳເນົາ | 2 ສະບັບ |